

# ເອກະລັກຂອງຊົນເຜົ່າ

# ງວນ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
# ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: “ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ”. ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມກ່ຽວກັບຊົນເຜົ່າ ງວນ ຄືນໃໝ່ໂດຍແຍກຈາກປຶ້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າ ງວນ ໃນ ສປປ ລາວ. ປຶ້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ງວນ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ ແລະ ບາງຮີດ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ງວນ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປ ລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ.....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກຢາຍພົນລະເມືອງ

ສຳລັບຊົນເຜົ່າ ງວນ ຢູ່ ສປປ ລາວ ຖືວ່າເປັນວ່າເປັນຊົນເຜົ່າທີ່ມີພົນລະເມືອງໜ້ອຍ ແລະ ມີພຽງແຕ່ 3 ບ້ານ ຢູ່ເມືອງທ່າແຂກ, ເມືອງ ບົວລະພາ ແຂວງ ຄຳມ່ວນ ແລະ ມີປະຊາກອນທັງໝົດ 1.344 ຄົນ, ຍິງ 687 ຄົນ.




- ຊົນເຜົ່າ ງວນ ທີ່ແຈກຢາຍຢູ່ແຕ່ລະບ່ອນ
  - ແຂວງ ຄຳມ່ວນ: ເມືອງ ບົວລະພາ, ເມືອງ ທ່າແຂກ

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ຊົນເຜົ່າ ງວນ ແມ່ນໜຶ່ງໃນຫຼາຍໆຊົນເຜົ່າ ທີ່ຕັ້ງພູມລຳເນົາເຫິງນານ ແລະ ຢູ່ຫຼາຍບ່ອນ. ສຳລັບປະເທດລາວເຮົາແມ່ນຢູ່ເຂດ ເມືອງ ບົວລະພາ ແລະ ເມືອງ ທ່າແຂກ ແຂວງ ຄຳມ່ວນ. ເຂົາເຈົ້າໄດ້ຍົກຍ້າຍຈາກປະເທດເພື່ອນບ້ານເຂົ້າມາລາວໃນລະຫວ່າງທ້າຍສະຕະວັດທີ XIX ໂດຍແມ່ນພໍ່ເຖົ້າ ດົງຫວັນມຽນ ເປັນຜູ່ນຳພາມາໂດຍຜ່ານເຂດ ເມືອງ ບົວລະພາ ແລະ ກໍແຍກຢາຍກັນໄປຕາມສະຖານທີ່ຕ່າງກັນ. ໃນເບື້ອງຕົ້ນຊົນເຜົ່ານີ້ໄດ້ອາໄສຢູ່ຕາມປ່າຕຶບດົງໜາ, ຍອດຫ້ວຍຮ່ອມພູ ແລະ ສະຖານທີ່ລັບລີ້.

ໄລຍະທີ່ ຝຣັ່ງເສດ ເຂົ້າມາປົກຄອງລາວເຮົາຊົນເຜົ່ານີ້ບໍ່ມີໃນບັນຊີ, ຍ້ອນພວກເຂົາຢູ່ລັບລີ້, ຕໍ່ມາພວກເຂົາໄດ້ຖືກຝຣັ່ງ ກວາດຕ້ອນລົງທົ່ງພຽງ, ໃນຄະນະທີ່ຈັກກະພັດ ຝຣັ່ງ ໄດ້ໄປປາບປາມຂະບວນຮັກຊາດເຂດຊາຍແດນ ລາວ-ຫວຽດນາມ ພ້ອມນຳຊົນເຜົ່າດັ່ງກ່າວ ອອກຈາກປ່າໄປຢູ່ທີ່ແຈ້ງ. ຊົນເຜົ່າ ງວນ ຍັງມີຢູ່ ຫວຽດນາມ ເປັນຕົ້ນ: ແຂວງ ກວາງບິງ ເມືອງ ມິງຮ່ວາ ແລະ ເອີ້ນຊື່ຊົນເຜົ່າ ງວນ ຄືກັນກັບ ລາວເຮົາ. ຊົນເຜົ່ານີ້ເອີ້ນຕົນເອງວ່າ: ງວນ, ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າກໍແມ່ນຊົນເຜົ່າ ງວນ, ມີຄວາມໝາຍວ່າ: ຍອດຫ້ວຍ, ປາຍຫ້ວຍ, ຮ່ອມພູ ຫຼື ຍອດພູເຂົາ. ກ່ອນສະໄໝ ຝຣັ່ງເສດ ປົກຄອງລາວ, ຊົນເຜົ່າ ງວນ ມີຊື່ໜຶ່ງຕ່າງຫາກ ເຊິ່ງຄົນລາວມັກເອີ້ນກັນວ່າ: ຫວຽດຕີໂນ, ມີຄວາມຫມາຍວ່າ: “ ໄປ ຫຼື ໄປໃສ ” ນັ້ນເອງ. ຊົນເຜົ່າ ງວນ ເກີດຂຶ້ນໃນສະໄໝຝຣັ່ງເສດ ປົກຄອງລາວ.

# ອາຊີບຂອງຊົນເຜົ່າ ງວນ

ດ້ານເສດຖະກິດໃນເມື່ອກ່ອນເຂົາເຈົ້າມີຄວາມສາມາດຕ່ຳຫູກ, ທໍ່ໄໝ, ປູກມອນ ແລະ ລ້ຽງມອນ. ສຳລັບຜູ່ຊາຍຈັກສານເຄື່ອງໃຊ້ໃນຄອບຄົວເຊັ່ນ: ກະບຸງ, ກະຕ່າ, ຂ້ອງ, ສ່ຽນ, ພາເຂົ້າດ້ວຍໄມ້ຕ່າງໆ. ພ້ອມນັ້ນເຂົາເຈົ້າຍັງມັກລ້ຽງໝູ, ໄກ່ ເພື່ອໄວ້ເຮັດຮີດຄອງຕ່າງໆ, ລ້ຽງງົວ, ຄວາຍ ໄວ້ເປັນສັດລາກແກ່. ຊົນເຜົ່າ ງວນ ຢູ່ເມືອງທ່າແຂກ ສ່ວນຫຼາຍແລ້ວກໍໄດ້ເຫັນແບບວິທີຫາກິນຄື: ແຕ່ດຶກດຳບັນເຮັດໄຮ່, ເຮັດສວນ, ປັດຈຸບັນເຂົາເຈົ້າໄດ້ຫັນປ່ຽນມາເຮັດອາຊີບການຄ້າຂາຍເປັນສ່ວນຫຼາຍ ແລະ ກາຍເປັນຜູ່ທີ່ມີຖານະດີຂຶ້ນຫຼາຍພໍສົມຄວນ. ສ່ວນຢູ່ເມືອງອື່ນໆແມ່ນຖືອາຊີບເຮັດການຜະລິດທາງດ້ານກະສິກຳເປັນຕົ້ນຕໍ.

# ທີ່ຕັ້ງບ້ານ ແລະ ເຮືອນ



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ

ການຊອກຫາສະຖານທີ່ຕັ້ງບ້ານ ແລະ ປຸກເຮືອນເຖົ້າແກ່ໄດ້ຊອກຫາເນື້ອທີ່ໆເໝາະສົມ, ມີເນື້ອທີ່ທຳການຜະລິດເຊັ່ນ: ເຮັດນາ, ເຮັດໄຮ່, ເຮັດສວນ. ກ່ອນຈະປຸກເຮືອນກໍຕ້ອງໄດ້ສ່ຽງແປັກແລ້ວຊູມີນ 2 ແຜ່ນເຊິ່ງເປັນການປັກຫຼັກໝາຍເຂດຈະປຸກສ້າງບໍ່ສະເພາະແຕ່ເທົ່ານັ້ນຍັງເປັນການປາບຜີ ຫຼື ຂໍຮ້ອງໃຫ້ຜີທີ່ຢູ່ບໍລິເວນປຸກສ້າງເຮືອນໜີອອກໄປຢູ່ບ່ອນອື່ນໆ.

ຊົນເຜົ່າ ງວນ ແຕ່ສະໄໝກ່ອນຕັ້ງເຮືອນຊູດິນ, ມຸງຫຍ້າ, ຝາເຮືອນທາດ້ວຍເປືອ, ການຈັດວາງຂ້າງໃນມີຕຽງນອນແຕ່ລະຄົນຈັດເປັນລ້ອກ, ຂັ້ນດ້ວຍຝາ ຫຼື ຜ້າກັ້ງ, ສົ້ນເບື້ອງໜຶ່ງຈະຈັດເປັນຫ້ອງບູຊາຜີ, ຢູ່ເທິງມີຫິ້ງ, ຢູ່ໃກ້ກັບຫ້ອງນອນ ຂອງພໍ່-ແມ່. ນອກຈາກນັ້ນ, ກໍຈະມີຫ້ອງນອນຂອງບັນດາລູກໆ, ເວລາມີແຂກມາຢາມເຮືອນ, ຄົນໃນເຮືອນກໍຈະຍົກສູງໃຫ້ແຂກນອນຢູ່ໃນຫ້ອງບູຊາຜີ ສ່ວນຄີໄຟຈະຢູ່ນອກ

ທີ່ເກາະອອກໄປເປັນເທີບຕິດກັບເຮືອນໃຫຍ່. ປັດຈຸບັນເຂົາເຈົ້າໄດ້ມີການພັດທະນາ ແລະ ມີການປະຍຸກໃນຕັ້ງເຮືອນຈະເປັນເຮືອນໄມ້, ເຮືອນຮ້ານ, ເຮືອນກໍ່ ແລະ ຮູບແບບອື່ນໆ ຕາມເງື່ອນໄຂສະພາບຄວາມເປັນຈິງຂອງແຕ່ລະຄອບຄົວພ້ອມກັບຍຸກສະໄໝ.

# ເຄື່ອງນຸ່ງຫົ່ມ

ເຄື່ອງນຸ່ງຫົ່ມຂອງຊົນເຜົ່າ ງວນ, ຜູ່ຊາຍ ແລະ ແມ່ຍິງຈະນຸ່ງສົ້ງຂາຍາວ ແລະ ເສື້ອແຂນຍາວປ່ອຍຄ້າຍຄຽງກັບເຄື່ອງນຸ່ງຂອງຊົນເຜົ່າມົ້ງ, ເຄື່ອງຂອງຊົນເຜົ່າ ງວນ ມັກໃຊ້ສີຂາວ ແລະ ສີເຫຼືອງ, ມີແພສີດໍາຄຽນ, ແຕ່ຜູ່ຊາຍຈະຄຽນແອວ, ແມ່ຍິງຈະຄຽນຫົວ, ໃສ່ປ້ວງຄໍ ແລະ ກ້ອງແຂນທີ່ຜະລິດດ້ວຍເງິນເປັນລວດລາຍທີ່ສະຫງ່າງາມຕາ. ໃນປັດຈຸບັນເຄື່ອງນຸ່ງຫົ່ມແມ່ນຈະບໍ່ຄ່ອຍເຫັນນອກຈາກພວກເຖົ້າແກ່ອາວຸໂສຈໍານວນໜຶ່ງທີ່ຍັງຮັກສາໄວ້, ສ່ວນຫຼາຍເຄື່ອງໃຊ້ປະຈໍາວັນແມ່ນຈະຫາຊື້ຕາມທ້ອງຕະຫຼາດ.



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ກົມຊົນເຜົ່າ

# ອາຫານ ແລະ ເຄື່ອງດື່ມ

ອາຫານຂອງຊົນເຜົ່າ ງວນ ແມ່ນເປັນອາຫານພື້ນບ້ານຄ້າຍຄືກັບເຜົ່າອື່ນໆ ທີ່ສາມາດຫາໄດ້ຕາມທ້ອງຖິ່ນຕົນ ແລະ ຕາມທ້ອງຕະຫຼາດນຳມາປຸງແຕ່ງເປັນປະເພດຕ່າງໆ ເຊັ່ນ: ລາບ, ແກງ, ເອາະ, ປີ້ງ, ໝົກ ແລະ ອື່ນໆ ນຳມາເປັນອາຫານໃນການດຳລົງຊີວິດປະຈຳວັນ ແລະ ພວກເຂົາເຈົ້າມັກກິນເຂົ້າໜຽວເປັນສ່ວນຫຼາຍ.



ພາບໂດຍ: ກົມຊົນເຜົ່າ



# ງານບຸນ

ໃນຮອບວຽນປີໜຶ່ງຂອງຊົນເຜົ່າ ງວນ ຊາວບ້ານເຂົາເຈົ້ານຳກັນຖືຜີມະເຫສັກ ແລະ ໄດ້ສ້າງຫໍຜີມະເຫສັກຂຶ້ນເປັນສ່ວນລວມຂອງບ້ານ ແລະ ມີການສ່ຽງຫາເຖົ້າແກ່ຜູ້ເປັນເຈົ້າ ເພື່ອເບິ່ງແຍງບົວລະບັດຮັກສາ ແລະ ບູຊາຫໍຜີໃນແຕ່ລະວັນສິນເພັງຂອງທຸກເດືອນ. ແຕ່ລະປີມີການລ້ຽງຫໍໃນລະຫວ່າງເດືອນ 3-4 ລາວ ເພື່ອຂໍສິ່ງສັກສິດມາຄຸ້ມຄອງປະຊາຊົນພາຍໃນບ້ານໃຫ້ຢູ່ດີ, ມີສຸກ ແລະ ມີໂຊກຕະຫຼອດໄປ. ນອກຈາກນັ້ນແຕ່ລະປີຊົນເຜົ່າ ງວນ ຈະມີການຈັດບຸນກິນເຕດຂຶ້ນ 2 ຄັ້ງຕໍ່ປີ ຄື: ບຸນເຕດໃຫຍ່ ແລະ ຍຸນເຕດນ້ອຍຊຶ່ງປະຕິບັດດັ່ງນີ້:

● ບຸນເຕດໃຫຍ່:

ຈັດຂຶ້ນໃນເດືອນໜຶ່ງຂອງທຸກໆປີກົງກັບອອກໃໝ່ໜຶ່ງຄ່ຳເດືອນສາມລາວ, ມີລັກສະນະດຽວກັນກັບຢູ່ຫວຽດນາມ, ໃນພິທີຈັດງານສິ່ງທີ່ຂາດບໍ່ໄດ້ທີ່ເປັນເອກະລັກຂອງງານບຸນດັ່ງກ່າວແມ່ນຫໍ່ເຂົ້າຕົ້ມໃຫຍ່, ປະເພດເຄື່ອງດອງ, ເຂົ້າໜົມ, ປາສົ້ມ ແລະ ອື່ນໆ. ການຈັດງານແມ່ນໃນຂອບເຂດ 3 ມື້, ມື້ທີໜຶ່ງແມ່ນເປັນມື້ແຈກຢາຍ ປັດໄຈໃຫ້ແກ່ຍາດຕິພີ່ນ້ອງ, ມື້ທີສອງແມ່ນໄຫວ້ພະຈັນ ແລະ ມື້ທີສາມແມ່ນມື້ປີໃໝ່ເປັນກິນ, ຊຸມແຊວມ່ວນຊື່ນ, ມີເຖົ້າແກ່ຜູ້ມີບົດບາດ, ມີຖານະຮັ່ງມີ, ມີອິດທິພົນໃນສັງຄົມຂຶ້ນຢ້ຽມຢາມເຮືອນເພື່ອອວບພອນໃຫ້ຄູ່ຜົວເມຍ ພ້ອມດ້ວຍຄອບຄົວຢູ່ດີມີແຮງ, ມີໂຊກ, ມີໄຊຕະຫຼອດໄປ ແລະເປັນອັນວ່າຈົບພິທີດັ່ງກ່າວ.

● ບຸນເຕດນ້ອຍ:

ສຳລັບບຸນເຕດນ້ອຍຈະຈັດຂຶ້ນໃນມື້ຂຶ້ນ 5 ຄ່ຳ ເດືອນ 5 ຂອງປະເທດຫວຽດນາມ ຊຶ່ງກົງກັບມື້ຂຶ້ນ 5 ຄ່ຳ ເດືອນ 5 ລາວ ແລະຈັດແຕ່ມື້ດຽວເທົ່ານັ້ນ. ນອກຈາກນີ້, ເຂົາເຈົ້າກໍມີການກິນຮີດເຂົ້າ-ອອກ ຊຶ່ງຈັດໃນມື້ອອກໃຫມ່ 2 ຄ່ຳ ເດືອນ 9 ລາວ ປະກອບມີເຂົ້າ ແລະໄກ. ນອກຈາກພາເຂົ້າເຮືອນແລ້ວຍັງມີການແຕ່ງພາເຂົ້າໜຶ່ງພາໄປຈຳຜີເຮືອນ ແລະ ຈັດໃນມື້ດຽວເທົ່ານັ້ນ.



ບຸນກິນເຕດ
ພາບໂດຍ: ກົມຊົນເຜົ່າ

# ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ດ້ານສິລະປະພື້ນເມືອງຂອງຊົນເຜົ່າ ງວນ ກໍມີລັກສະນະປະຈຳເຜົ່າຕົນເຊັ່ນ: ການຂັບຮ້ອງທຳນອງເພັງ, ຕູ້ມ (ຜະຫຍາຍ່ອຍ), ປີ່ (ຕົງໂຕຍ), ສະໄກວ (ຕົງໂຕຍ) ຣໍທວກ (ກາບກອນ), ພື້ນສືບ ແລະ ອື່ນໆ.



ພາບໂດຍ: ກົມຊົນເຜົ່າ

# ພາສາປາກເວົ້າ

ຊົນເຜົ່າ ງວນ ມີພາສາປາກເວົ້າເປັນຂອງຕົນ, ບໍ່ມີຕົວໜັງສືຂຽນ, ເຂົາເຈົ້າໃຊ້ພາສາຂອງຕົນເພື່ອສື່ສານກັບຊົນເຜົ່າຕົນ, ແຕ່ກັບຊົນເຜົ່າອື່ນແມ່ນນຳໃຊ້ພາສາ ລາວ. ພາສາ ງວນ ຈັດເຂົ້າໃນໝວດພາສາ ມອນ-ຂະແມ, ສາຂາ ຫວຽດ-ເມືອງ.

# ການສົມທຽບ
# ພາສາ ລາວ ກັບ ພາສາ ງວນ

| ລຳດັບ | ພາສາ ລາວ | ພາສາ ງວນ |
|---|---|---|
| 01 | ສະບາຍດີ | ຈ້າວຊຶກແຂ່ວ |
| 02 | ໂຊກດີ | ໝັນໝັ່ນ |
| 03 | ຂອບໃຈ | ກ່າມເອີນ |
| 04 | ຂໍໂທດ | ຊິນໂລ່ຍ |
| 05 | ເຈົ້າຊື່ຫຍັງ? | ເຢີາເຕນສີ? |
| 06 | ເຮັດຫຍັງຢູ່? | ເຫັນສີຈີ່ໝັນ? |
| 07 | ກິນເຂົ້າແລ້ວບໍ? | ອັນເກີມເຈືອ? |
| 08 | ລາກ່ອນ | ຕີດ່າຢ່າ |
| 09 | ພົບກັນໃໝ່ | ຈ່າມຈັກເໝີຍ |
| 10 | ບໍ່ເປັນຫຍັງ | ໂຂຍວັກສີ |

*ຂໍ້ມູນໂດຍ: ນາຍບ້ານ ບ້ານ ປ່າພະນັງ ເມືອງ ບົວລະພາ ແຂວງ ຄຳມ່ວນ*